Multicultural Problem Gambling Service for NSW
*strengthening people and families*

gambling HELP
PHONE • FACE TO FACE • ONLINE
1800 858 858
www.gamblinghelp.nsw.gov.au

**Lao**

0 000000 001445 2707111
MPGS/PMM/FS/LAO

# ມີຄໍາເລົ່າລືທີ່ບໍ່ເປັນຈິງ, ການເຊື່ອໂຊກລາງ ແລະ ຄວາມເຊື່ອແບບຜິດໆ ຫຼາຍຢ່າງຊຶ່ງມີຂຶ້ນຢູ່ຕາມຕູ້ຫຼິ້ນເກມ

**ຄໍາເລົ່າລືທີ່ບໍ່ເປັນຈິງ 1**

ບັນດາຕູ້ເກມຕ່າງໆ ໄດ້ຖືກເຮັດໄປແກຣມ ໃຫ້ໄດ້ເງິນຖ້າຫາກ ວ່າໄດ້ມີການເສັຍ ມາຫຼາຍໆເທື່ອແລ້ວ ໃນຊວງນຶ່ງ.

**ຄວາມຈິງ:**

ບັນດາຕູ້ຫຼິ້ນເກມຕ່າງໆ ແລ່ນແບບບໍ່ເລືອກ **ຕລອດເວລາ** ບໍ່ວ່າຈະມີການໄດ້ ຫຼືການເສັຍໃນ ເວລາທີ່ຜ່ານມາ.

**ຄໍາເລົ່າລືທີ່ບໍ່ເປັນຈິງ 2**

ຕູ້ຫຼິ້ນເກມຈະ ຈ່າຍອອກ ຫຼາຍໃນເວລາ ພິເສດສະເພາະ ຂອງມື້.

**ຄວາມຈິງ:**

ບໍ່ມີຄວາມແຕກຕ່າງ ຫຍັງສໍາລັບການທໍາ ງານຂອງຕູ້ຫຼິ້ນເກມ ບໍ່ວ່າຈະຫຼິ້ນໃນເວລາ ສະເພາະຂອງຕອນ ກາງເວັນ ຫຼື ກາງຄືນຂອງ ມື້ກໍຕາມ

**ຄໍາເລົ່າລືທີ່ບໍ່ເປັນຈິງ 3**

ຫຼັງຈາກທີ່ມີການ ເສັຍມາຫຼາຍຄັ້ງ ຄົນ ຫຼິ້ນຄວນສືບຕໍ່ການ ຫຼິ້ນເພາະວ່າຕູ້ຈະ "ຈ່າຍຄືນໃຫ້" ໂດຍ ການໃຫ້ມີການໄດ້ ເງິນຄືນ.

**ຄວາມຈິງ:**

ການຫຼິ້ນຄັ້ງທີ່ຜ່ານໆ ມາຈະບໍ່ມີອິດທິພົນ ໃດໆຕໍ່ເກມຄັ້ງອື່ນ, ຫຼືເກມອື່ນທີ່ຫຼິ້ນເປັນ ຊຸດ, ທີ່ອາດຈະ ຫຼິ້ນ ຕໍ່ໄປແຕ່ຢ່າງ ໃດເລີຍ.

**ຄໍາເລົ່າລືທີ່ບໍ່ເປັນຈິງ 4**

ຕູ້ຫຼິ້ນເກມສາມາດຖືກເຮັດໃຫ້ຈ່າຍເງິນອອກໄດ້ດ້ວຍການເຮັດວິທີແບບຕ່າງໆ ເຊັ່ນ:

**ຄວາມຈິງ:**

| | |
|---|---|
| • ປ່ຽນວິທີການຫຼິ້ນ | **ຜິດ** |
| • ລູບຄໍາຕູ້ແບບຕ່າງໆ | **ຜິດ** |
| • ປ່ຽນຈໍານວນເງິນທີ່ລົງ | **ຜິດ** |
| • ປ່ຽນຈໍານວນແຖວຂອງເກມທີ່ຫຼິ້ນ | **ຜິດ** |
| • ການຄົ້ນພົບເຄັດລັບຂອງ "ທັກສະ" ໃນການຫຼິ້ນ | **ຜິດ** |
| • ການປ່ຽນຄວາມໄວຂອງການຫຼິ້ນ | **ຜິດ** |

## ຕູ້ຫຼິ້ນເກມທໍາງານແບບໃດ

ຜົນອອກຂອງທຸກໆເກມແມ່ນໄດ້ຖືກກໍານົດໄວ້ໂດຍເຄື່ອງແຈກຈ່າຍໂຕເລກແບບບໍ່ເລືອກ (Random Number Generator - RNG). ອັນນີ້ແມ່ນ "ຕູ້ສ່ຽງໂຊກ" ຊຶ່ງໄດ້ເລືອກເອົາເຄື່ອງໝາຍສໍາລັບແຕ່ລະເກມໄວ້ແລ້ວ. ເທັກໂນໂລຈີຈະ ຄວບຄຸມລັກສນະຂອງເກມທັງໝົດຈາກການປ້ອນເງິນຫຼຽນ ຫຼື ເງິນໃບເພື່ອຈະກໍານົດຜົນອອກຂອງການໝູນແຕ່ລະຄັ້ງ.

## ດ້ວຍເຫດນີ້ ຜົນອອກຂອງເກມໃດນຶ່ງຈຶ່ງເປັນສິ່ງທີ່ທວາຍບໍ່ຖືກສເມີ

- ດັ່ງນັ້ນ ທ່ານຈຶ່ງ **ກະ** ໄວ້ໄດ້ໂລດວ່າຈະເສັຍເງິນໃນລະຍະຍາວ ເພາະວ່າທ່ານບໍ່ສາມາດໃຊ້ທັກສະແບບໃດໆເພື່ອຊນະຕູ້ເກມໄດ້.
- ຢ່າລົງເງິນທີ່ທ່ານບໍ່ສາມາດເສັຍໄດ້ - ຈົ່ງຈໍາກັດຂອບເຂດ
- ພະຍາຍາມຈົດບັນທຶກຂອງການເສັຍແລະການໄດ້ຫຼັງຈາກການຫຼິ້ນແຕ່ລະຄັ້ງເພື່ອທ່ານຈະໄດ້ຮູ້ວ່າທ່ານໄດ້ຈ່າຍໄປເທົ່າໃດ
- ຖ້າທ່ານດື່ມເຫຼົ້າໃນເວລາທີ່ທ່ານຫຼິ້ນ ກໍຈົ່ງດື່ມໃຫ້ພໍປານກາງ - ດື່ມເຫຼົ້າຫຼາຍເກີນໄປອາດຈະນໍາພາໄປສູ່ການຈ່າຍເງິນຫຼາຍຂຶ້ນກວ່າທີ່ທ່ານໄດ້ກະໄວ້ໃນຕອນທີ່ທ່ານເລີ້ມຫຼິ້ນໃໝ່ໆ.

## ຄົນຫຼິ້ນບາງຄົນອາດພົບພໍ້ບັນຫາເລື້ອງການຫຼິ້ນການພະນັນ. ລັກສະນະຕ່າງໆອາດຮວມເຖິງ:

- ຄິດເຖິງເລື້ອງການຫຼິ້ນການພະນັນຫຼາຍ
- ເພີ້ມຈໍານວນການລົງເງິນ ແລະ ຫຼິ້ນຕິດຕໍ່ໄປເພື່ອຕິດຕາມເອົາເງິນທີ່ເສັຍຄືນ
- ຊູກເຊື່ອງລັກສະນະການຫຼິ້ນການພະນັນຈາກຄອບຄົວ ແລະ ໝູ່ເພື່ອນ
- ກູ້ຢືມເງິນເພື່ອເອົາມາຫຼິ້ນການພະນັນ, ຂາຍ ຫຼື ຈໍານໍາສິ່ງຂອງໃນເຮືອນເພື່ອໃຫ້ມີເງິນຈ່າຍຄ່າບິລເກັບເງິນ ຫຼື ເພື່ອເອົາໄປຫຼິ້ນການພະນັນ
- ຫຼິ້ນການພະນັນເພື່ອໃຫ້ລືມບັນຫາ

## ຈົ່ງຕິດຕໍ່ພວກເຮົາຕາມໝາຍເລກ 1800 856 800 ລະຫວ່າງ 8.30 ໂມງເຊົ້າ ແລະ 5.00 ໂມງແລງ ວັນຈັນ ຫາ ວັນສຸກ

NSW GOVERNMENT

Financial assistance for this project was provided by the New South Wales Government from the Responsible Gambling Fund (RGF). The views expressed in this publication however, are solely those of the author/s. Designed, translated and printed with permission from the Australian Gaming Machine Manufacturers Association in 2008.

English

Multicultural Problem Gambling Service for NSW
*strengthening people and families*

gambling HELP
PHONE • FACE TO FACE • ONLINE
1800 858 858
www.gamblinghelp.nsw.gov.au

# A number of myths, superstitions and false beliefs have developed around gaming machines.

| MYTH 1 | FACT |
|---|---|
| Machines are programmed to produce winning games if there have been too many losses recorded in a period. | Gaming machines operate randomly AT ALL TIMES no matter what wins or losses have occurred in the past. |

| MYTH 2 | FACT |
|---|---|
| Gaming machines pay out more at special times of the day. | It makes no difference to a machine's operation if it is played at any particular time of the day or night. |

| MYTH 3 | FACT |
|---|---|
| After a run of losing games, a player should continue playing because the machine will 'make up for it' by producing a run of wins. | Previous games have no influence at all over any game, or series of games, that might be played in the future. |

**MYTH 4**

A machine can be tricked into producing winning combinations by:

**FACT**

| | |
|---|---|
| • altering play patterns | FALSE |
| • touching the machine in some way | FALSE |
| • changing bet levels | FALSE |
| • altering the number of lines played | FALSE |
| • discovering a secret 'skill' factor | FALSE |
| • changing the speed of play | FALSE |

## How gaming machines operate

All game results are determined by a Random Number Generator (RNG). This is a "chance machine" that selects the symbols for each game. Technology controls all aspects of the game from coin or note insertion to determining the outcome of each spin.

## Hence the outcome of any game is always unpredictable

- Therefore you should EXPECT to lose money in the long run, as you cannot use any form of skill to beat the machine
- Do not bet money you cannot afford to lose – set a limit
- Try to keep a record of wins and losses after each session of play so you know how much you are spending
- If you drink alcoholic beverages when playing, do so in moderation – too much alcohol may lead to more money being spent than you intended at the start of play

## Some players may experience problems with gambling. Signs may include:

- Thinking a lot about gambling activity
- Increasing amounts gambled and chasing losses
- Hiding signs of your gambling from family and friends
- Borrowing money to gamble, selling or pawning household items to meet bills or to gamble with
- Gambling to forget troubles

## Contact us on 1800 856 800
## 8.30am and 5.00pm Monday to Friday

NSW GOVERNMENT

Financial assistance for this project was provided by the New South Wales Government from the Responsible Gambling Fund (RGF). The views expressed in this publication however, are solely those of the author/s. Designed, translated and printed with permission from the Australian Gaming Machine Manufacturers Association in 2008.